ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1944 /ອຄ. ທຄວ

ນະຄອນຫຼວງວຽງຈັນ, ວັນທີ 20 ຕຸລາ 2014.

# ແຈ້ງການ

ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ສະພາການຄ້າ ແລະ ອຸດສາຫະກຳ, ສະມາຄົມ ຫລື ກຸ່ມທຸລະກິດ
- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ

ເລື່ອງ : ຂອບເຂດຄວາມຮັບຜິດຊອບ ໃນການຂຶ້ນທະບຽນວິສາຫະກິດ ລະຫວ່າງກະຊວງອຸດສາຫະກຳ ແລະ ການຄ້າ ກັບ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

- ອີງໃສ່ມະຕິ 3 ສ້າງ ຂອງກົມການເມືອງສູນກາງພັກ ;
- ອີງໃສ່ ຂໍ້ 2 ມາດຕາ 206 (ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ - 2013 ;
- ອີງຕາມເນື້ອໃນຈິດໃຈ ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ.

ເພື່ອ 1) ໃຫ້ການຄຸ້ມຄອງທະບຽນວິສາຫະກິດ ເປັນລະບົບ; 2) ເພີ່ມທະວີການກະຈາຍຍວກບໍລິການຂຶ້ນທະບຽນວິສາຫະກິດ ບົນພື້ນຖານຄວາມພ້ອມ ຂອງທ້ອງຖິ່ນ; 3) ຫຼຸດຜ່ອນສະພາບການແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອເຮັດທຸລະກິດໃນຫຼາຍກິດຈະການ ໂດຍບໍ່ມີເປົ້າໝາຍທີ່ຊັດເຈນ ເຮັດໃຫ້ການພັດທະນາທຸລະກິດ ບໍ່ມີເອກະລັກສະເພາະດ້ານ ບໍ່ສາມາດແຂ່ງຂັນ ແລະ ສ້າງມີຄວາມເຂັ້ມແຂງໄດ້ ; 4) ທັງເພື່ອເປັນການແກ້ໄຂຄວາມສັບສົນໃນການໄປຂຶ້ນທະບຽນວິສາຫະກິດຫຼາຍບ່ອນ ກັບໄປກັບມາ ແລະ ການຊໍ້າຊ້ອນ ລະຫວ່າງບັນຊີປະເພດທຸລະກິດຄວບຄຸມ ກັບບັນຊີປະເພດທຸລະກິດທີ່ກະຊວງສະຫງວນສິດໄວ້ພິຈາລະນາ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

## ກ. ຂອບເຂດການຂຶ້ນທະບຽນວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບ)

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ (ກະຊວງອຸດສາຫະກຳ ແລະ ການຄ້າ) ຮັບຜິດຊອບໃນການໃຫ້ບໍລິການຂຶ້ນທະບຽນວິສາຫະກິດ ໃນວຽກງານ ແລະ ໃນຂອບເຂດທຸລະກິດ ທີ່ມີຄວາມສຳຄັນ ແລະ ມີຄວາມອ່ອນໄຫວ ຕໍ່ເສດຖະກິດ ແລະ ສັງຄົມ ດັ່ງນີ້:

1. ການກວດກາ ແລະ ອະນຸມັດຊື່ວິສາຫະກິດ ;

2. ການສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ຕ່າງປະເທດ ຢູ່ ສປປ ລາວ;

3. ການສ້າງຕັ້ງລັດວິສາຫະກິດ ທີ່ລະບຽບກົດໝາຍ ກຳນົດໃຫ້ນາຍົກເປັນຜູ້ອະນຸມັດສ້າງຕັ້ງ;

4. ການສ້າງຕັ້ງບໍລິສັດມະຫາຊົນ ລວມທັງການປ່ຽນແປງຮູບແບບເປັນບໍລິສັດມະຫາຊົນ;

5. ການສ້າງຕັ້ງວິສາຫະກິດ ໃນປະເພດທຸລະກິດ ທີ່ກ່ຽວກັບ:

   5.1. ການບິນ;

   5.2. ການທະນາຄານ (ສຳລັບຮ້ານແລກປ່ຽນເງິນຕາ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງ ທີ່ຮ້ານຕັ້ງຢູ່ຂຶ້ນທະບຽນວິສາຫະກິດໃຫ້ ພາຍຫຼັງໄດ້ຮັບອະ ນຸຍາດຈາກຂະແໜງທະນາຄານ);

   5.3. ການປະກັນໄພ;

   5.4. ການສຶກສາ (ໂຮງຮຽນ ຊັ້ນສູງຂຶ້ນໄປ);

   5.5. ການແພດ (ຄລີນິກ ຂຶ້ນໄປ);

   5.6. ການຈັດຫາງານ;

   5.7. ການບໍລິການກໍ່ສ້າງ ແລະ ສ້ອມແປງສະຖານີໄຟຟ້າ, ເຂື່ອນໄຟຟ້າ ແລະ ສາຍສົ່ງໄຟຟ້າ ທີ່ມີທຶນຈົດທະບຽນແຕ່ ໜຶ່ງຕື້ກີບ ຂຶ້ນໄປ;

   5.8. ການບໍລິການສຳຫຼວດອອກແບບ, ກໍ່ສ້າງ ແລະ ສ້ອມແປງ (ຂົວ, ທາງ, ເຄຫາສະຖານ ແລະ ຊົນລະປະທານ) ທີ່ມີທຶນຈົດທະບຽນແຕ່ ສອງຮ້ອຍສີ່ສິບຕື້ ຂຶ້ນໄປ;

   5.9. ການບໍລິການຂົນສົ່ງສິນຄ້າ (ບົກ, ນ້ຳ, ອາກາດ) ທີ່ມີທຶນຈົດທະບຽນແຕ່ ສິບຕື້ ຂຶ້ນໄປ;

   5.10. ການຜະລິດພະລັງງານໄຟຟ້າ (ນ້ຳ, ແສງອາທິດ, ລົມ);

   5.11. ການບໍລິການກວດສອບບັນຊີ;

   5.12. ການບໍລິການຂຸດຄົ້ນແຮ່ທາດ (ໃຫ້ບໍລິສັດທີ່ໄດ້ຮັບສຳປະທານ);

   5.13. ໂຮງງານອຸດສາຫະກຳປຸງແຕ່ງທີ່ນຳໃຊ້ເຄື່ອງຈັກ ຫລືແຮງງານແຕ່ 201 ແຮງມ້າ/ຄົນ ຂຶ້ນໄປ;

   5.14. ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ແກັດສ໌ (ບໍ່ໄລ່ແກັດສ໌ຫຸງຕົ້ມ);

   5.15. ການນຳເຂົ້າພາຫະນະ (ລົດແລ່ນດ້ວຍເຄື່ອງຈັກທຸກປະເພດ);

   5.16. ການບໍລິການໃຫ້ເຊົ່າ ຫລື ຊື້-ຂາຍອະສັງຫາລິມະຊັບ;

   5.17. ທຸລະກິດ ທີ່ມີແຈ້ງການສະເພາະ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ຢູ່ກະຊວງ ເຊັ່ນ: ທຸລະກິດບໍລິການໃຫ້ຄຳປຶກສາ ເປັນຕົ້ນ.

ປະເພດທຸລະກິດ ຕາມຂໍ້ ກ (5) ນີ້ ຈະມີການປ່ຽນແປງໄປ ເພີ່ມ ຫລື ຫຼຸດ ຕາມເງື່ອນໄຂ ຄວາມຈຳເປັນ ແລະ ຄວາມພ້ອມຂອງທ້ອງຖິ່ນ ໃນແຕ່ລະໄລຍະ.

ຂ. ການຂຶ້ນທະບຽນວິສາຫະກິດ (ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງຮັບຜິດຊອບ)

ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ຮັບຜິດຊອບໃນການໃຫ້ບໍລິການຂຶ້ນທະບຽນວິສາຫະກິດ ທັງໝົດ ໃນວຽກງານ ແລະ ຂອບເຂດທຸລະກິດ ດັ່ງນີ້:

1. ການລົງທະບຽນ ໃນປຶ້ມທະບຽນ ແລະ ອອກໃບຢັ້ງຢືນການລົງທະບຽນ ສ້າງຕັ້ງສາຂາຂອງວິສາຫະກິດ (ນິຕິບຸກຄົນ) ພາຍໃນປະເທດ ເພື່ອຄຸ້ມຄອງການເຄື່ອນໄຫວຂອງສາຂາວິສາຫະກິດດັ່ງກ່າວ ;
2. ຮັບຮອງຊື່ວິສາຫະກິດ;
3. ການສ້າງຕັ້ງລັດວິສາຫະກິດ ທີ່ລະບຽບກົດໝາຍກຳນົດໃຫ້ຂັ້ນແຂວງ (ເຈົ້າແຂວງ ຫລື ເຈົ້າຄອງນະຄອນຫຼວງ) ເປັນຜູ້ອະນຸມັດສ້າງຕັ້ງ;
4. ການສ້າງຕັ້ງວິສາຫະກິດໃນປະເພດທຸລະກິດ ນອກຈາກທີ່ກ່າວມາໃນຂໍ້ ກ (5) ເທິງນີ້;
5. ການຂຶ້ນທະບຽນວິສາຫະກິດ ສະເພາະໃດໜຶ່ງຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ (ຖ້າມີ).

ຄ. ຫຼັກການພື້ນຖານ ຂອງການປະກອບທຸລະກິດ ຫລື ການສ້າງຕັ້ງວິສາຫະກິດ

ຫຼັກການພື້ນຖານ ຂອງການປະກອບທຸລະກິດ ຫລື ການສ້າງຕັ້ງວິສາຫະກິດ (ໃນໄລຍະໃໝ່) ແມ່ນ:

1. ສົ່ງເສີມການປະກອບທຸລະກິດໃນປະເພດທຸລະກິດ ທີ່ເປັນຫຼັກຕົ້ນຕໍໃດໜຶ່ງ ບວກກັບກິດຈະການ ຫລື ທຸລະກິດຍ່ອຍທີ່ເປັນອ້ອມທຸລະກິດຕົ້ນຕໍ ດັ່ງກ່າວ;

2. ການປະກອບທຸລະກິດທີ່ມີຫຼາຍປະເພດທຸລະກິດແຕກຕ່າງກັນ ແມ່ນສົ່ງເສີມໃຫ້ສ້າງຕັ້ງເປັນວິສາຫະກິດ (ບຸກຄົນ ຫລືນິຕິບຸກ) ຕ່າງຫາກ ແນໃສ່ທັນວິສາຫະກິດໄປສູ່ການເຮັດທຸລະກິດສະເພາະດ້ານ, ມີເປົ້າໝາຍຊັດເຈນ ງ່າຍແກ່ການຄຸ້ມຄອງຂອງເຈົ້າຂອງທຶນ ແລະ ການເກັບເສັຍພາສີ-ອາກອນຂອງລັດ ທັງເປັນການສ້າງພື້ນຖານ ໃຫ້ແກ່ການສ້າງກຸ່ມບໍລິສັດໃຫ້ຖືກຕ້ອງຕາມກົດໝາຍໃນອານາຄົດ (ສຳລັບຮູບແບບບໍລິສັດ);

3. ການຂຶ້ນທະບຽນວິສາຫະກິດ ຂອງບຸກຄົນ ຫລື ນິຕິບຸກຄົນໜຶ່ງ ເພື່ອດຳເນີນທຸລະກິດ ໃນຫຼາຍປະເພດທຸລະກິດທີ່ແຕກຕ່າງກັນ ເປັນສິດທິຂອງຜູ້ລົງທຶນ ແຕ່ໃນເງື່ອນໄຂຂອງການແບ່ງຂັ້ນຄຸ້ມຄອງ ຕາມມະຕິ 3 ສ້າງນີ້ ຜູ້ລົງທຶນທີ່ຍັງຢາກແຈ້ງຂຶ້ນທະບຽນວິສາຫະກິດ ໂດຍຄອບປະເພດທຸລະກິດຂັ້ນຄຸ້ມຄອງ ທັງຂອງກະຊວງ ແລະ ຂອງແຂວງພ້ອມກັນ ຕ້ອງເປັນເຈົ້າການຮັບຜິດຊອບຕໍ່ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນແຕ່ລະຂັ້ນຄຸ້ມຄອງ (ຜ່ານລະບົບບໍລິການປະຕູດຽວ ທີ່ອອກແບບມາເປັນກໍລະນີສະເພາະ) ດັ່ງທີ່ໄດ້ກຳນົດໄວ້ໃນແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ງ. ການຈັດຕັ້ງປະຕິບັດ

1. ກ່ອນການແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນ (ໂດຍສະເພາະຜູ້ລົງທຶນພາຍໃນ) ພິຈາລະນາຢ່າງລະອຽດ ຖີ່ຖ້ວນ ກ່ຽວກັບຮູບການວິສາຫະກິດ ແລະ ຂອບເຂດປະເພດທຸລະກິດ ທີ່ເໝາະສົມ ເພື່ອເລີ່ມຕົ້ນທຸ

ລະກິດຢ່າງມີເປົ້າໝາຍ ເໝາະສົມກັບຄວາມຮູ້ ຄວາມສາມາດ ແລະ ຂອບເຂດທຶນຮອນຂອງຕົນ ເຮັດໃຫ້ສາມາດສຸມທຸກກຳລັງແຮງພັດທະນາທຸລະກິດ ທີ່ຕົນມີຄວາມພ້ອມກວ່າໝູ່ ໃຫ້ເຂັ້ມແຂງ ແຂ່ງຂັນໄດ້ ມີເອກະລັກ ແລະ ມີຊື່ສຽງ ຄືກັນກັບວິສາຫະກິດຂອງຕ່າງປະເທດ ແລ້ວຄ່ອຍໆຂະຫຍາຍຂອບເຂດໄປຕາມການເຕີບໂຕທີ່ເປັນຈິງຂອງທຸລະກິດ ດັ່ງກ່າວ;

2. ການແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອເຮັດທຸລະກິດ ໃນຫຼາຍປະເພດທຸລະກິດພ້ອມກັນ ສາມາດປະຕິບັດໄດ້ (ໂດຍສະດວກ) ຖ້າປະເພດທຸລະກິດ ທີ່ແຈ້ງຂຶ້ນທະບຽນວິສາຫະກິດນັ້ນ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຂັ້ນດຽວກັນ ເຊັ່ນ ຂັ້ນກະຊວງ ຫລື ຂັ້ນແຂວງ ຕາມທີ່ກ່າວມາໃນ ຂໍ້ ກ ແລະ ຂ ເທິງນີ້;

3. ໃນກໍລະນີ ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ຫາກມີຄວາມປະສົງ ຢາກເຮັດທຸລະກິດໃນປະເພດທຸລະກິດ ໂດຍມີຂັ້ນກະຊວງ ແລະ ຂັ້ນແຂວງ ຮັບຜິດຊອບຢູ່ນຳກັນ ແມ່ນມອບໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເປັນຜູ້ຂຶ້ນທະບຽນວິສາຫະກິດໃຫ້ ພາຍໃຕ້ຫຼັກການຮັບປະກັນການປະຕິບັດສິດ, ຄວາມຮັບຜິດຊອບຂອງທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ເນື້ອໃນຈິດໃຈຂອງມະຕິ 3 ສ້າງຂອງກົມການເມືອງສູນກາງພັກ ດັ່ງນີ້:

3.1. ຜູ້ລົງທຶນຕ້ອງປະກອບສຳນວນເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຍື່ນຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງ (ແຂວງທີ່ວິສາຫະກິດ ຈະຕັ້ງສຳນັກງານຢູ່) ເພື່ອພິຈາລະນາ ຕາມຂັ້ນຕອນການປະຕິບັດປົກກະຕິຂອງແຂວງດັ່ງກ່າວ. ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງແຂວງດັ່ງກ່າວ ສາມາດພິຈາລະນາໄດ້ ສະເພາະແຕ່ປະເພດທຸລະກິດທີ່ຢູ່ໃນຂອບເຂດຂັ້ນຄຸ້ມຄອງຂອງແຂວງ ຕາມທີ່ບົ່ງໄວ້ໃນ ຂໍ້ ຂ ເທິງນີ້ ເທົ່ານັ້ນ.

(ເພື່ອໃຫ້ການພິຈາລະນາໄວຂຶ້ນ ຜູ້ລົງທຶນ ສາມາດຍື່ນສຳນວນຄຳຮ້ອງ ໃຫ້ກະຊວງພ້ອມກັນເລີຍກໍໄດ້).

3.2. ຫຼັງຈາກເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງໄດ້ຜ່ານທຸກຂັ້ນຕອນການພິຈາລະນາຂອງຕົນ ເຖິງຂັ້ນຕອນສຸດທ້າຍແລ້ວ ໃນກໍລະນີ:

- ປະເພດທຸລະກິດທັງໝົດ ທີ່ສະເໜີແຈ້ງຂຶ້ນທະບຽນວິສາຫະກິດ ໄດ້ຮັບການເຫັນດີທັງໝົດ, ໃຫ້ເຮັດສະໂນດນຳສົ່ງ ພ້ອມສຳນວນເອກະສານຄຳຮ້ອງ ມອບໃຫ້ຜູ້ຍື່ນຄຳຮ້ອງ ເພື່ອຍື່ນຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ;
- ປະເພດທຸລະກິດທັງໝົດ ທີ່ສະເໜີແຈ້ງຂຶ້ນທະບຽນວິສາຫະກິດ ບໍ່ໄດ້ຮັບການເຫັນດີ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນຂອງການປະຕິເສດດັ່ງກ່າວໃຫ້ຜູ້ຍື່ນຄຳຮ້ອງ ເລີຍ;
- ບໍ່ເຫັນດີບາງສ່ວນ ກໍໃຫ້ຕອບ ໂດຍປະຕິບັດ ຕາມຂີດຫຍໍ້ໜ້າຖັດເທິງນີ້, ສຳລັບສ່ວນທີ່ເຫັນດີ ໃຫ້ປຶກສາກັບຜູ້ລົງທຶນ ວ່າ: ຍັງສົນໃຈທີ່ຈະເຮັດ ຫລື ບໍ່, ຖ້າສົນໃຈເຮັດແມ່ນໃຫ້ເຮັດສະໂນດນຳສົ່ງ ພ້ອມສຳນວນເອກະສານຄຳຮ້ອງ ມອບໃຫ້ຜູ້ຍື່ນຄຳຮ້ອງ ເພື່ອຍື່ນຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ;

3.3. ເມື່ອເຈົ້າໜ້າທີ່ທະບຽນວິສາຫະກິດຂອງກະຊວງ ໄດ້ຮັບສະໂນດນຳສົ່ງຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງ ແລະ ປະເພດທຸລະກິດຂັ້ນກະຊວງຄຸ້ມຄອງ ໄດ້ຜ່ານທຸກຂັ້ນຕອນການພິຈາລະນາແລ້ວ ໃນກໍລະນີ:

- ທຸກປະເພດທຸລະກິດ (ທັງໃນຂັ້ນກະຊວງ ແລະ ຂັ້ນແຂວງຄຸ້ມຄອງ) ໄດ້ຮັບການເຫັນດີ ແມ່ນໃຫ້ຂຶ້ນທະບຽນວິສາຫະກິດໃຫ້ຜູ້ຍື່ນຄຳຮ້ອງ;

- ປະເພດທຸລະກິດບາງສ່ວນ ບໍ່ໄດ້ຮັບການເຫັນດີ ກໍໃຫ້ຕອບ ຕາມບົດບັນຍັດຂອງກົດໝາຍ, ສຳລັບສ່ວນທີ່ເຫັນດີ ໃຫ້ປຶກສາກັບຜູ້ລົງທຶນ ວ່າ: ຍັງສົນໃຈທີ່ຈະເຮັດ ຫລື ບໍ່, ຖ້າສົນໃຈເຮັດແມ່ນໃຫ້ຂຶ້ນທະບຽນວິສາຫະກິດ ໃນສ່ວນທີ່ໄດ້ຮັບການເຫັນດີ ທັງໃນຂັ້ນກະຊວງ ແລະ ຂັ້ນແຂວງ;

- ບໍ່ເຫັນດີທັງໝົດ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກະຊວງ ປຶກສາກັບຜູ້ລົງທຶນ ວ່າ: ຍັງສົນໃຈທີ່ຈະເຮັດປະເພດທຸລະກິດທີ່ຂັ້ນແຂວງເຫັນດີ ຫລືບໍ່, ຖ້າສົນໃຈເຮັດແມ່ນໃຫ້ເຮັດສະໂນດ ພ້ອມສຳນວນເອກະສານຄຳຮ້ອງ ມອບໃຫ້ຜູ້ລົງທຶນ ໄປຂຶ້ນທະບຽນວິສາຫະກິດ ນຳແຂວງທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ.

3.4. ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ ຫາກມີການເພີ່ມກິດຈະການ ທີ່ກ່ຽວກັບຂັ້ນຄຸ້ມຄອງຂອງກະຊວງ ແລະ ແຂວງ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງທີ່ກ່າວມາໃນ ຂໍ້ 3 (3.1, 3.2 ແລະ 3.3 ເທິງນີ້ ເຊັ່ນ:

- ທະບຽນວິສາຫະກິດ ທີ່ກະຊວງເປັນຜູ້ອອກ ແຕ່ເພີ່ມກິດຈະການທີ່ຢູ່ໃນຂັ້ນແຂວງຮັບຜິດຊອບ ແມ່ນໃຫ້ວິສາຫະກິດທີ່ກ່ຽວຂ້ອງ ຍື່ນຄຳຮ້ອງປັບປຸງເນື້ອໃນທະບຽນນຳເຈົ້າໜ້າທີ່ທະບຽນວິສາຫະກິດແຂວງທີ່ກ່ຽວຂ້ອງ ເພື່ອພິຈາລະນາ ຕາມຂັ້ນຕອນ ແລ້ວສະໂນດສົ່ງໃຫ້ກະຊວງ ເພື່ອປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້;

- ທະບຽນວິສາຫະກິດ ທີ່ແຂວງໃດຂຶ້ນທະບຽນວິສາຫະກິດໃຫ້ ແຕ່ເພີ່ມກິດຈະການທີ່ຢູ່ໃນຂັ້ນກະຊວງຮັບຜິດຊອບ ແມ່ນໃຫ້ຍື່ນຄຳຮ້ອງປັບປຸງເນື້ອໃນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກະຊວງ ເພື່ອພິຈາລະນາ ຕາມຂັ້ນຕອນ ແລ້ວສະໂນດສົ່ງໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງ ເພື່ອປ່ຽນແປງເນື້ອໃນທະບຽນວິສາຫະກິດໃຫ້;

3.5. ສຳລັບວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ ໃນໄລຍະຜ່ານມາ ຢູ່ຂັ້ນໃດ ຫລື ແຂວງໃດ ກໍໃຫ້ຂັ້ນນັ້ນ ຫລື ແຂວງນັ້ນເປັນຜູ້ສືບຕໍ່ ຂຶ້ນທະບຽນປ່ຽນແປງເນື້ອໃນ ແລະ ຄຸ້ມຄອງໃນລະບົບທະບຽນວິສາຫະກິດຕໍ່ໄປ ແຕ່ການເພີ່ມກິດຈະການໃໝ່ ພາຍຫຼັງແຈ້ງການສະບັບນີ້ປະກາດໃຊ້ ແມ່ນໃຫ້ປະຕິບັດຢ່າງເຂັ້ມງວດ ຕາມຂັ້ນຕອນ ທີ່ກ່າວມາ ໃນຂໍ້ 3.4 ເທິງນີ້;

4. ສຳລັບລັດວິສາຫະກິດ ແມ່ນຂຶ້ນທະບຽນວິສາຫະກິດ ໃນປະເພດທຸລະກິດ ຕາມການອະນຸມັດຂອງ ~~ຂັ້ນເທິງ ຂອງແຕ່ລະຂັ້ນ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;~~

5. ການຂຶ້ນທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງນັ້ນ ສາມາດຂຶ້ນທະບຽນວິສາຫະກິດ ໃຫ້ໄດ້ແຕ່ສະເພາະວິສາຫະກິດທີ່ມີສຳນັກງານໃຫຍ່ ຕັ້ງຢູ່ທ້ອງຖິ່ນຂອງຕົນເທົ່ານັ້ນ. ໃນກໍລະນີ ວິສາຫະກິດໃດໜຶ່ງ ຕ້ອງການຍ້າຍທີ່ຕັ້ງສຳນັກງານ ຈາກແຂວງໜຶ່ງ ໄປຕັ້ງຢູ່ອີກແຂວງໜຶ່ງ ຕ້ອງໃຫ້ພະແນກ

ອຸດສາຫະກຳ ແລະການຄ້າແຂວງຕົ້ນທາງ ເຮັດສະໂນດກ່ຽວກັບການຂໍຍ້າຍທີ່ຕັ້ງສຳນັກງານຂອງວິສາຫະກິດ ດັ່ງກ່າວ ມອບໃຫ້ວິສາຫະກິດ ໄປປະສານກັບພະແນກອຸດສາຫະກຳ ແລະ ການຄ້າແຂວງທີ່ກ່ຽວຂ້ອງ ເພື່ອຍື່ນຄຳຮ້ອງປ່ຽນແປງເນື້ອໃນ ແລະ ຂຶ້ນທະບຽນວິສາຫະກິດ ໃຫ້ຖືກຕ້ອງຕາມຂັ້ນຕອນ ຂອງລະບຽບກົດໝາຍ;

6. ໃຫ້ລົບລ້າງແຈ້ງການ ສະບັບເລກທີ 1707/ອຄ.ທຄອ, ລົງວັນທີ 6 ກັນຍາ 2013 ກ່ຽວກັບບັນຊີປະເພດທຸລະກິດທີ່ຂັ້ນກະຊວງ (ບັນດາກະຊວງ) ສະຫງວນສິດໄວ້ພິຈາລະນາ ກ່ອນອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດ.

ການລົບລ້າງແຈ້ງການດັ່ງກ່າວມານີ້ ບໍ່ແມ່ນການລົບລ້າງສິດ ທີ່ບັນດາກະຊວງສະຫງວນໄວ້ພິຈາລະນາ, ແຕ່ປະເພດທຸລະກິດໃດ ທີ່ບັນດາກະຊວງຍັງສະຫງວນສິດໃນການພິຈາລະນາ ກ່ອນການຂຶ້ນທະບຽນວິສາຫະກິດນັ້ນ ແມ່ນໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງພະແນກອຸດສາຫະກຳ ແລະການຄ້າຂັ້ນແຂວງ ຮ່ວມກັບພະແນກສາຍຂວາງທີ່ກ່ຽວຂ້ອງ ຫລື ຄະນະປະສານງານບໍລິການປະຕູດຽວຂັ້ນຂອງຕົນ ປະສານກັບກະຊວງທີ່ກ່ຽວຂ້ອງປະຕິບັດໃຫ້ຖືກຕ້ອງ ຮັບປະກັນຄວາມສະດວກ ແລະ ມີວ່ອງໄວ. ກໍລະນີມີຄວາມຫຍຸ້ງຍາກ ກໍໃຫ້ປະສານກັບກະຊວງດັ່ງກ່າວ ເພື່ອພິຈາລະນາ ມອບສິດໃຫ້ທ້ອງຖິ່ນ (ໃຫ້ເປັນລວງດຽວກັນ) ຕາມມະຕິ 3 ສ້າງຂອງສູນກາງພັກ;

7. ໃນຂອບເຂດສິດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ (ຂ) ແຈ້ງການສະບັບນີ້, ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງເປັນຜູ້ພິຈາລະນາ ຕາມເງື່ອນໄຂຄວາມສາມາດຕົວຈິງຂອງແຕ່ລະບ່ອນ ວ່າອັນໃດຄວນມອບໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ເປັນຜູ່ຂຶ້ນທະບຽນວິສາຫະກິດຕາມເນື້ອໃນ ຈິດໃຈ ນະໂຍບາຍ 3 ສ້າງຂອງຂັ້ນເທິງ;

8. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຕ້ອງເອົາໃຈໃສ່:

- ເຜີຍແຜ່, ແນະນຳຜູ້ລົງທຶນ ໃຫ້ເຂົ້າໃຈຢ່າງຖືກຕ້ອງ ຕໍ່ຫຼັກການພື້ນຖານຂອງການຂຶ້ນທະບຽນວິສາຫະກິດ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ຕາມຈິດໃຈ ຂອງແຈ້ງການສະບັບນີ້;
- ຊ່ວຍຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ໃຫ້ມີຄວາມພ້ອມ ກ່ອນການມອບວຽກບໍລິການຂຶ້ນທະບຽນວິສາຫະກິດໃຫ້ (ເຊັ່ນ: ອຸປະກອນ, ບຸກຄະລາກອນ ແລະ ຄວາມສາມາດດ້ານວິຊາສະເພາະໃນການຮັບມືກັບວຽກ) ແນໃສ່ຮັບປະກັນປະສິດທິຜົນຂອງວຽກ ແລະ ຄວາມສະດວກສະບາຍໃນການໃຫ້ບໍລິການຂຶ້ນທະບຽນວິສາຫະກິດ ຮັບໃຊ້ຜູ້ລົງທຶນ ໂດຍສະເພາະປະຊາຊົນບັນດາເຜົ່າຢ່າງເຕັມສ່ວນ.

9. ຫ້າມເດັດຂາດບໍ່ໃຫ້: 1) ຂຶ້ນທະບຽນວິສາຫະກິດ ຂັດກັບລະບຽບກົດໝາຍ ເຊັ່ນ ຂໍ້ກຳນົດກ່ຽວກັບທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ, ເງື່ອນໄຂສຳລັບນັກລົງທຶນຕ່າງປະເທດ, ເງື່ອນໄຂຂຶ້ນທະບຽນ ໃນປະເພດທຸລະກິດຄວບຄຸມ ເປັນຕົ້ນ, 2) ຂຶ້ນທະບຽນວິສາຫະກິດ ນອກຂອບເຂດຄວາມຮັບຜິດຊອບຂອງຕົນ ຫລື 3) ສ້າງຂັ້ນຕອນເອກະສານ, ເກັບຄ່າ ຫລື ກະທຳການໃດໆ ກໍຕາມ ທີ່ຢູ່ນອກລະບຽບ ກົດໝາຍ. ໃນກໍລະນີລະເມີດ ຈະຖືກປະຕິບັດວິໄນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 210 ແລະ 214 ກົດໝາຍວ່າດ້ວຍວິສາຫະກິດ ສະບັບປັບປຸງ ຢ່າງເຂັ້ມງວດ;

10. ການຈັດຕັ້ງປະຕິບັດການຂຶ້ນທະບຽນວິສາຫະກິດ ພາຍໃຕ້ຂອບເຂດຕາມແຈ້ງການສະບັບນີ້ ແມ່ນໃຫ້ເລີ່ມຕົ້ນປະຕິບັດນັບແຕ່ວັນທີ 27 ຕຸລາ 2014 ເປັນຕົ້ນໄປ. ໃນກໍລະນີ ພະແນກອຸດສາຫະກໍາ ແລະ ການຄ້າ ຂັ້ນແຂວງໃດ ຫາກຍັງບໍ່ທັນເຂົ້າໃຈແຈ້ງ ໃນເລື່ອງໃດ ໃຫ້ປະສານຂໍການຊີ້ນໍາ ຫລືຄໍາປຶກສາລະອຽດ ແລະ ໂດຍກົງນໍາກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ;

11. ແຈ້ງການສະບັບນີ້ ປ່ຽນແທນ ແຈ້ງການ, ເລກທີ 1618/ອຄ.ທຄວ, ລົງວັນທີ 28 ສິງຫາ 2013 ແລະ ລົບລ້າງແຈ້ງການ ສະບັບເລກທີ 1707/ອຄ.ທຄວ, ລົງວັນທີ 6 ກັນຍາ 2013 ກ່ຽວກັບບັນຊີປະເພດທຸລະກິດ, ຂະໜາດທຸລະກິດ, ປະເພດວິສາຫະກິດ ແລະ ຮູບແບບບໍລິສັດທີ່ຂັ້ນກະຊວງ (ບັນດາກະຊວງ) ສະຫງວນສິດໄວ້ພິຈາລະນາ ກ່ອນອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ;

ຄຸນສະຫວາດ ສີແສງອາພ